# ມາດຕະຖານ
# ກິດຈະກຳການທ່ອງທ່ຽວທາງຖ້ຳ



# ມາດຕະຖານກິດຈະກຳການທ່ອງທ່ຽວທາງຖ້ຳ

# ຄຳນຳ

ຖ້ຳຈັດເປັນແຫຼ່ງທ່ອງທ່ຽວທາງທຳມະຊາດທີ່ມີເອກະລັກສະເພາະຕົວ ມີຄວາມມະຫັດສະຈັນລຶກລັບ ແລະ ທ້າທາຍຕໍ່ຄວາມຮູ້ສຶກຂອງມະນຸດ ກໍ່ໃຫ້ເກີດຄວາມສົນໃຈຢາກໄປທ່ຽວຊົມ ແລະ ຢາກສຳຜັດ. ຖ້ຳໄດ້ຈັດເປັນແຫຼ່ງທ່ອງທ່ຽວທາງທຳມະຊາດທີ່ສຳຄັນອີກປະເພດໜຶ່ງ ນອກຈາກນີ້ຖ້ຳຍັງມີຄວາມຜູກພັນກັບຂະໜົບທຳນຽມ ແລະ ປະເພນີຂອງມະນຸດມາແຕ່ດົນນານແລ້ວ. ໃນສະໄໝກ່ອນມະນຸດ ແລະ ສັດນຳໃຊ້ຖ້ຳເປັນທີ່ຢູ່ອາໃສມາແຕ່ດຶກດຳບັນ ຖ້ຳຈຶ່ງມີຄວາມສຳຄັນໃນການສຶກສາຄົ້ນຄວ້າທາງດ້ານປະຫວັດສາດ, ບູຮານຄະດີ ແລະ ວິວັດທະນະການຕ່າງໆ.

ຄວາມອຸດົມສົມບູນ ແລະ ຄວາມສວຍງາມທາງດ້ານຊັບພະຍາກອນທຳມະຊາດທີ່ມີຢູ່ໃນປະເທດລາວເປັນຈຸດດຶງດູດສຳຄັນຂອງການທ່ອງທ່ຽວ ຊຶ່ງຖ້ຳກໍເປັນຊັບພະຍາກອນແຫຼ່ງທ່ອງທ່ຽວທຳມະຊາດໜຶ່ງທີ່ມີຄວາມສວຍງາມ ແລະ ມະຫັດສະຈັນ ຊຶ່ງໄດ້ຮັບການພັດທະນາໃຫ້ກາຍເປັນສະຖານທີ່ທ່ອງທ່ຽວ ແລະ ເປັນທີ່ນິຍົມຂອງນັກທ່ອງທ່ຽວໃນການທ່ຽວຊົມ, ແຕ່ການນຳໃຊ້ຊັບພະຍາກອນທຳມະຊາດເພື່ອເປັນສະຖານທີ່ທ່ອງທ່ຽວໂດຍຂາດການວາງແຜນທີ່ດີ ກໍຈະເຮັດໃຫ້ຊັບພະຍາກອນທຳມະຊາດຫຼາຍແຫ່ງເກີດການເຊື່ອມໂຊມ ແລະ ສົ່ງຜົນກະທົບຕໍ່ການທ່ອງທ່ຽວ. ສະຖານທີ່ທ່ອງທ່ຽວທາງທຳມະຊາດປະເພດຖ້ຳມີຄວາມແຕກຕ່າງຈາກແຫຼ່ງທ່ອງທ່ຽວປະເພດອື່ນໆ ເນື່ອງຈາກເປັນສິ່ງທີ່ມີຢູ່ ແລະ ເກີດຂຶ້ນເອງຕາມທຳມະຊາດ ແລະ ມີສະພາບປ່ຽນແປງໄປໄດ້ຕາມການເວລາ, ມີຄວາມສຳພັນທີ່ຊັບຊ້ອນ ໃນຕົວເອງດ້ວຍປັດໃຈຕ່າງໆ. ການປ່ຽນແປງທາງດ້ານສິ່ງແວດລ້ອມພາຍໃນຖ້ຳອາດຈະຄ່ອຍເປັນຄ່ອຍໄປ ຫຼື ອາດຈະປ່ຽນແປງໄວຈົນ ເບິ່ງເຫັນໄດ້ຢ່າງຊັດເຈນ ຊຶ່ງຂຶ້ນແຕ່ລະກໍລະນີແມ່ນຂຶ້ນກັບການນຳໃຊ້ຂອງມະນຸດ. ຖ້າຫາກການນຳໃຊ້ຖ້ຳບໍ່ໄດ້ຮັບການວາງແຜນເປັນຢ່າງດີ ແລະ ບໍ່ມີຄວາມເຂົ້າໃຈຢ່າງຖືກຕ້ອງຂອງຜູ້ຊົມໃຊ້ ກໍຈະສ້າງຜົນກະທົບທາງດ້ານລົບຕໍ່ກັບລະບົບທຳມະຊາດຂອງຖ້ຳ ແລະ ເຮັດໃຫ້ຖ້ຳຊຸດໂຊມລົງ.

ດັ່ງນັ້ນ ການກຳນົດມາດຕະຖານ ຫຼື ກົດລະບຽບໃນການຄຸ້ມຄອງການດຳເນີນການຂອງຫົວໜ່ວຍທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວທາງທຳມະຊາດປະເພດຖ້ຳຕ່າງໆ ໄດ້ນຳໄປໃຊ້ເປັນແນວທາງໃນການພັດທະນາສະຖານທີ່ທ່ອງທ່ຽວ ແລະ ເປັນເຄື່ອງມືເພື່ອຍົກລະດັບມາດຕະຖານການພັດທະນາການທ່ອງທ່ຽວແບບຍືນຍົງຂອງ ສປປ ລາວ.

# ສາລະບານ


ຄຳນຳ ........ i

ສາລະບານ ........ ii

ພາກທີ I: ພາກສະເໜີ ........ 1

1.1 ເຫດຜົນ ແລະ ຫຼັກການພື້ນຖານ ........ 1

1.1.1 ເຫດຜົນ ........ 1

1.1.2 ຫຼັກການພື້ນຖານ ........ 1

1.2 ອະທິບາຍຄຳສັບ ........ 3

1.3 ຈຸດປະສົງ ........ 3

1.4 ຂອບເຂດການນຳໃຊ້ ........ 4

ພາກທີ II: ບັນດາເງື່ອນໄຂຫຼັກສຳລັບກິດຈະກຳການທ່ອງທ່ຽວທາງຖ້ຳ ........ 5

2.1 ບັນດາເງື່ອນໄຂ ........ 5

2.1.1 ເງື່ອນໄຂສຳລັບຜູ້ປະກອບການ ........ 5

2.1.2 ເງື່ອນໄຂຂອງຖ້ຳທີ່ຈະພັດທະນາເປັນສະຖານທີ່ທ່ອງທ່ຽວ ........ 7

2.1.3 ເງື່ອນໄຂສຳລັບນັກທ່ອງທ່ຽວ ........ 7

2.2 ການປະເມີນບັນດາເງື່ອນໄຂ ແລະ ເກນໃຫ້ຄະແນນ ........ 8

2.3 ການອອກໃບຢັ້ງຢືນ ........ 12

ພາກທີ III: ມາດຕະການໃນການຈັດຕັ້ງປະຕິບັດ, ນະໂຍບາຍ ແລະ ມາດຕະການຕໍ່ຜູ້ລະເມີດ ........ 13

3.1 ການແກ້ໄຂຂໍ້ຂັດແຍ້ງ ........ 15

3.2 ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ........ 15

ເອກະສານຊ້ອນທ້າຍ ........ 15

# ພາກທີ I: ພາກສະເໜີ

## 1.1 ເຫດຜົນ ແລະ ຫຼັກການພື້ນຖານ

### 1.1.1 ເຫດຜົນ

ສປປ ລາວ ມີແຫຼ່ງທ່ອງທ່ຽວປະເພດຖໍ້າຢູ່ເປັນຈຳນວນຫຼາຍແຫ່ງ ຊຶ່ງບາງແຫ່ງກໍໄດ້ຮັບການພັດທະນາໃຫ້ກາຍເປັນສະຖານທີ່ທ່ອງທ່ຽວແລ້ວ, ແຕ່ປະຈຸບັນສະຖານທີ່ທ່ອງທ່ຽວປະເພດຖໍ້າບາງແຫ່ງໄດ້ຖືກທຳລາຍ ຫຼື ຢູ່ໃນສະພາບລ້ອມທີ່ຊຸດໂຊມ ເຊັ່ນ: ມີການຂີດຂຽນໃສ່ຕາມຝາຜະໜັງຂອງຖໍ້າ; ທຸບ ຫຼື ຫັກເອົາຫີນງອກຫີນຍ້ອຍ; ການປຸກສ້າງຕໍ່ເຕີມ, ການຂຸດເຈາະຕ່າງໆ ທີ່ບໍ່ຖືກຕ້ອງກັບເຕັກນິກວິຊາການ. ດັ່ງນັ້ນ, ການນຳໃຊ້ຊັບພະຍາກອນທຳມະຊາດປະເພດຖໍ້າ ຈຶ່ງຕ້ອງມີການວາງແຜນທີ່ລະອຽດ ແລະ ຊັດເຈນ ເພື່ອເຮັດໃຫ້ຜົນກະທົບທາງດ້ານລົບຕໍ່ສະພາບແວດລ້ອມມີໜ້ອຍທີ່ສຸດ. ເນື່ອງຈາກວ່າ ຊັບພະຍາກອນທຳມະຊາດປະເພດຖໍ້າ ຖ້າຫາກຖືກທຳລາຍແລ້ວ ແມ່ນຍາກຕໍ່ການຟື້ນຟູ ຫຼື ບໍ່ສາມາດຟື້ນຟູໄດ້ເລີຍ. ດັ່ງນັ້ນ, ການດຳເນີນກິດຈະກຳຕ່າງໆທີ່ຢູ່ພາຍໃນຖໍ້າ ຫຼື ບໍລິເວນໃກ້ຄຽງຕ້ອງໄດ້ພິຈາລະນາຢ່າງຖີ່ຖ້ວນວ່າຈະມີຜົນກະທົບແນວໃດ, ຫຼາຍໜ້ອຍສໍ່າໃດ, ມີມາດຕະການໃນການຫຼຸດຜົນກະທົບແນວໃດ ແລະ ມີວິທີການຄຸ້ມຄອງກິດຈະກຳຕ່າງໆຄືແນວໃດ ເພື່ອບໍ່ໃຫ້ສິ່ງຜົນກະທົບຕໍ່ການປ່ຽນແປງສະພາບຂອງຖໍ້າ ພ້ອມທັງຮັບປະກັນຄວາມປອດໄພຂອງຜູ້ທີ່ມາທ່ຽວຊົມຖໍ້າ. ດັ່ງນັ້ນ, ການສ້າງມາດຕະຖານກິດຈະກຳການທ່ອງທ່ຽວທາງຖໍ້າຂຶ້ນ ກໍເພື່ອເປັນແນວທາງ ແລະ ເຄື່ອງມືໃຫ້ແກ່ການພັດທະນາການທ່ອງທ່ຽວໃນຖໍ້າມີປະສິດທິພາບ ແລະ ມີຄວາມຍືນຍົງຫຼາຍຂຶ້ນ.

### 1.1.2 ຫຼັກການພື້ນຖານ

❖ **ຄວາມອາດສາມາດທີ່ຈະພັດທະນາຖໍ້າໃຫ້ເປັນສະຖານທີ່ທ່ອງທ່ຽວ**

ການພັດທະນາຖໍ້າ ເພື່ອໃຫ້ກາຍເປັນສະຖານທີ່ທ່ອງທ່ຽວ ຕ້ອງໄດ້ຄຳນຶງເຖິງຫຼາຍປັດໃຈ ເພື່ອບໍ່ໃຫ້ເກີດການທຳລາຍຕໍ່ສະພາບທຳມະຊາດຂອງຖໍ້າ, ຫຼັກການໃນການປະເມີນຄວາມອາດສາມາດທີ່ຈະພັດທະນາຖໍ້າໃຫ້ກາຍເປັນສະຖານທີ່ທ່ອງທ່ຽວຕ້ອງໄດ້ຄຳນຶງເຖິງ, ຂະໜາດຂອງຖໍ້າ, ລັກສະນະພາຍໃນຖໍ້າ, ການເຂົ້າເຖິງຖໍ້າ, ກິດຈະກຳທີ່ກໍ່ໃຫ້ເກີດການທຳລາຍສະພາບທຳມະຊາດຂອງຖໍ້າ, ຄວາມສ່ຽງທີ່ຈະຖືກທຳລາຍທຳມະຊາດຂອງຖໍ້າ, ຄວາມປອດໄພພາຍໃນຖໍ້າ, ການຖ່າຍເທອາກາດພາຍໃນຖໍ້າ, ການນຳໃຊ້ອຸປະກອນ ແລະ ວັດສະດຸທີ່ເໝາະສົມ, ການຈັດກິດຈະກຳທີ່ເໝາະສົມ, ພະນັກງານຜູ້ຄຸ້ມຄອງ, ໂອກາດໃນການພັດທະນາເປັນສະຖານທີ່ທ່ອງທ່ຽວ, ຄວາມສາມາດໃນການຮອງຮັບນັກທ່ອງທ່ຽວ ແລະ ການຄຸ້ມຄອງສະຖານທີ່ທ່ອງທ່ຽວ.

❖ **ມາດຕະຖານສະຖານທີ່ທ່ອງທ່ຽວປະເພດຖໍ້າ**

ອົງປະກອບໃນການກຳນົດຄຸນະພາບຂອງສະຖານທີ່ທ່ອງທ່ຽວທາງຖໍ້າ ຊຶ່ງປະກອບດ້ວຍ 3 ອົງປະກອບຫຼັກ ຄື: 1) ຄຸນຄ່າດ້ານການທ່ອງທ່ຽວ, 2) ຄວາມອາດສາມາດໃນການພັດທະນາດ້ານການທ່ອງທ່ຽວ, 3) ການຄຸ້ມຄອງ.

- **ອົງປະກອບທີ 1: ຄຸນຄ່າດ້ານການທ່ອງທ່ຽວ**

ໝາຍເຖິງຄຸນຄ່າ ຫຼື ຄວາມສຳຄັນຂອງຊັບພະຍາກອນການທ່ອງທ່ຽວທາງຖໍ້າ ຊຶ່ງເກີດຂຶ້ນຈາກຫຼາຍອົງປະກອບ, ທັງດ້ານຄວາມສຳຄັນຕໍ່ລະບົບນິເວດ, ຄວາມສຳຄັນຕໍ່ມະນຸດ, ຄຸນຄ່າທາງດ້ານການຮຽນຮູ້ ແລະ ຄຸນຄ່າທາງດ້ານຈິດໃຈ.

ຫຼັກການທີ່ໃຊ້ໃນການປະເມີນຄຸນຄ່າ ແລະ ຄວາມດຶງດູດໃຈຂອງສະຖານທີ່ທ່ອງທ່ຽວທາງຖໍ້າ ປະກອບດ້ວຍ 2 ປັດໄຈ ຄື:

1. ຄຸນຄ່າທາງທຳມະຊາດ ປະກອບດ້ວຍ: ຄວາມງາມຂອງຖໍ້າ, ນໍ້າພາຍໃນຖໍ້າ, ຫີນງອກຫີນຍ້ອຍ, ສິ່ງທີ່ມີຊີວິດພາຍໃນຖໍ້າ.
2. ຄຸນຄ່າທາງດ້ານສິລະປະວັດທະນະທຳ ປະກອບດ້ວຍ: ບູຮານວັດຖຸ ຫຼື ຊາກດຶກດຳບັນທີ່ມີຢູ່ໃນຖໍ້າ, ການເດີນທາງມາຂອງບຸກຄົນສຳຄັນ, ຄວາມເຊື່ອຖື ຫຼື ຫຼັກຖານທາງປະຫວັດສາດ, ຄວາມສຳພັນກັບສາສະໜາ.

- **ອົງປະກອບທີ 2: ຄວາມອາດສາມາດໃນການພັດທະນາເປັນສະຖານທີ່ທ່ອງທ່ຽວ**

ໝາຍເຖິງອົງປະກອບຕ່າງໆ ທີ່ເຮັດໃຫ້ແຫຼ່ງທ່ອງທ່ຽວທາງຖໍ້າ ມີຄວາມສາມາດພັດທະນາໃຫ້ເປັນສະຖານທີ່ທ່ອງທ່ຽວ ຄື:

1. ມີຄວາມສະດວກໃນການເຂົ້າເຖິງສະຖານທີ່ທ່ອງທ່ຽວ
2. ມີຄວາມສະດວກໃນການເຂົ້າເຖິງປາກຖໍ້າ ແລະ ໃນຖໍ້າ, ເຊື່ອມໂຍງກັບເສັ້ນທາງການທ່ອງທ່ຽວຫຼັກ.
3. ມີທ່າແຮງໃນການສ້າງກິດຈະກຳການທ່ອງທ່ຽວ
4. ມີຄວາມປອດໄພ ແລະ ບໍ່ເປັນອັນຕະລາຍຕໍ່ນັກທ່ອງທ່ຽວດ້ວຍປັດໄຈຕ່າງໆ
5. ຄວາມອາດສາມາດໃນການຮອງຮັບນັກທ່ອງທ່ຽວ
6. ການຮ່ວມມືລະຫວ່າງພາກລັດ, ພາກທຸລະກິດ ແລະ ປະຊາຊົນທ້ອງຖິ່ນ ໃນການພັດທະນາການ ທ່ອງທ່ຽວ.

- **ອົງປະກອບທີ 3: ການຄຸ້ມຄອງ.**

ໝາຍເຖິງ ຄວາມສາມາດໃນການບໍລິຫານຄຸ້ມຄອງສະຖານທີ່ທ່ອງທ່ຽວ ເພື່ອເຮັດໃຫ້ການພັດທະນາ ມີຄວາມຍືນຍົງ ຄື:

1. ການຄຸ້ມຄອງການທ່ອງທ່ຽວເພື່ອໃຫ້ມີຄວາມຍືນຍົງ ປະກອບດ້ວຍການອະນຸລັກຊັບພະຍາກອນທຳມະຊາດ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການບໍລິຫານຄຸ້ມຄອງການທ່ອງທ່ຽວ.
2. ການຍົກລະດັບຄວາມຮູ້ ແລະ ການປູກຈິດສຳນຶກ ໃຫ້ພາກສ່ວນທີ່ກ່ຽວຂ້ອງ, ການຮຽນຮູ້ຄຸນຄ່າຂອງຊັບພະຍາກອນທຳມະຊາດ, ລະບົບນິເວດ ແລະ ການອະນຸລັກສິ່ງແວດລ້ອມໃຫ້ແກ່ນັກທ່ອງທ່ຽວ, ພະ

ນັກງານທີ່ຮັບຜິດຊອບປົກປັກຮັກສາສະຖານທີ່, ຜູ້ປະກອບການ ແລະ ປະຊາຊົນທ້ອງຖິ່ນ ລວມທັງການກະຈາຍລາຍໄດ້ ຫຼື ຜົນປະໂຫຍດສູ່ທ້ອງຖິ່ນ.

3. ດ້ານເສດຖະກິດ ແລະ ສັງຄົມ: ຊຸກຍູ້ໃຫ້ປະຊາຊົນທ້ອງຖິ່ນມີສ່ວນຮ່ວມໃນການສ້າງກິດຈະກຳການທ່ອງທ່ຽວ, ການປະກອບຄຳຄິດຄຳເຫັນໃນການວາງແຜນ, ການຕັດສິນບັນຫາ, ມີສ່ວນຮ່ວມຮັບຜິດຊອບຕໍ່ຜົນກະທົບທີ່ອາດຈະເກີດຂຶ້ນ ແລະ ຮັບປະກັນການກະຈາຍລາຍໄດ້ລົງສູ່ຊຸມຊົນ.

## 1.2 ອະທິບາຍຄຳສັບ

**ມາດຕະຖານ:** ໝາຍເຖິງ ການກຳນົດຄຸນລັກສະນະຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ສິ່ງແວດລ້ອມ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງກັບມາດຕະຖານເພື່ອຕີລາຄາ, ຈັດແບ່ງປະເພດ ແລະ ຈັດລະດັບຄຸນນະພາບຂອງສິ່ງທີ່ກ່າວມານັ້ນ.

**ກິດຈະກຳການທ່ອງທ່ຽວ:** ໝາຍເຖິງ ການເຄື່ອນໄຫວວຽກງານກ່ຽວກັບການບໍລິການນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ ເຊັ່ນ: ການທ່ຽວຊົມ, ການບູລະນະແຫຼ່ງທ່ອງທ່ຽວ, ການພັກເຊົາ, ການບໍລິການສະຖານທີ່ພັກແຮມ ແລະ ການນຳທ່ຽວ.

**ຜະລິດຕະພັນທ່ອງທ່ຽວ:** ໝາຍເຖິງ ຊັບພະຍາກອນການທ່ອງທ່ຽວຕາມທຳມະຊາດ ແລະ ມະນຸດສ້າງຂຶ້ນເພື່ອເປັນສິ່ງຮອງຮັບ, ສະໜອງ ແລະ ບໍລິການໃຫ້ນັກທ່ອງທ່ຽວ.

**ແຫຼ່ງທ່ອງທ່ຽວ:** ໝາຍເຖິງ ຊັບພະຍາກອນການທ່ອງທ່ຽວທີ່ໄດ້ຮັບການພັດທະນາໃຫ້ເປັນສະຖານທີ່ທ່ອງທ່ຽວເພື່ອສາມາດດຶງດູດນັກທ່ອງທ່ຽວໃຫ້ເດີນທາງມາທ່ຽວຊົມ.

**ສະຖານທີທ່ອງທ່ຽວ:** ໝາຍເຖິງ ແຫຼ່ງທ່ອງທ່ຽວທີ່ໄດ້ຮັບການພັດທະນາ ແລະ ມີການບໍລິການໃຫ້ແກ່ນັກທ່ອງທ່ຽວ.

**ລະບົບນິເວດ:** ໝາຍເຖິງ ສາຍພົວພັນລະຫວ່າງສິ່ງທີ່ມີຊີວິດ ແລະ ສິ່ງບໍ່ມີຊີວິດທີ່ຄົງຕົວຢູ່ຕາມທຳມະຊາດ.

**ຊີວະນາໆພັນ:** ໝາຍເຖິງ ຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນຂອງສິ່ງທີ່ມີຊີວິດ ເຊັ່ນ: ພືດ , ສັດ, ແມງ ໄມ້ ແລະ ຈຸລິນຊີ ຢູ່ໃນຂອບເຂດທຳມະຊາດໃດໜຶ່ງ.

## 1.3 ຈຸດປະສົງ

- ເພື່ອເຮັດໃຫ້ການພັດທະນາກິດຈະກຳການທ່ອງທ່ຽວທາງຖ້ຳ ໃຫ້ມີຄວາມເປັນລະບຽບ ແລະ ເຂົ້າສູ່ລະບົບ.
- ເພື່ອເປັນບ່ອນອີງໃຫ້ແກ່ພາກລັດ ແລະ ພາກທຸລະກິດໃນການບໍລິຫານຄຸ້ມຄອງກິດຈະກຳການທ່ອງທ່ຽວທາງຖ້ຳ.
- ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ກິດຈະກຳການທ່ອງທ່ຽວທາງຖ້ຳ.

## 1.4 ຂອບເຂດການນຳໃຊ້

ມາດຕະຖານກິດຈະກຳການທ່ອງທ່ຽວສະບັບນີ້ ໄດ້ກຳນົດຈຸດປະສົງ ແລະ ເງື່ອນໄຂຂອງມາດຕະຖານກິດຈະກຳການທ່ອງທ່ຽວທາງຖ້ຳ, ມາດຕະຖານສະບັບນີ້ນຳໃຊ້ເພື່ອເປັນບ່ອນອີງໃນການພັດທະນາ ແລະ ຄຸ້ມຄອງກິດຈະກຳການທ່ອງທ່ຽວທາງຖ້ຳໃຫ້ແກ່ພາກລັດ ແລະ ພາກທຸລະກິດ ພ້ອມທັງຕອບສະໜອງການບໍລິການຕ້ອນຮັບນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.

# ພາກທີ II: ບັນດາເງື່ອນໄຂຫຼັກສຳລັບກິດຈະກຳການທ່ອງທ່ຽວທາງຖ້ຳ

## 2.1 ບັນດາເງື່ອນໄຂ

### 2.1.1 ເງື່ອນໄຂສຳລັບຜູ້ປະກອບການ

❖ **ການດຳເນີນທຸລະກິດການທ່ອງທ່ຽວ**

- ຜູ້ປະກອບການຕ້ອງມີໃບທະບຽນວິສະຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນການນຳໃຊ້ທີ່ດິນ, ໃບຢັ້ງຢືນສິ່ງແວດລ້ອມ ແລະ ປະກັນໄພ ທີ່ຖືກຕ້ອງຈາກພາກສ່ວນທີ່ກ່ຽວຂ້ອງ.
- ມີແຜນພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວ ຊຶ່ງປະກອບມີການຈັດສັນແບ່ງເຂດ.
- ໄດ້ຈັດຕັ້ງປະຕິບັດກິດຈະກຳຕ່າງໆ ທີ່ສອດຄ່ອງກັບແຜນພັດທະນາການທ່ອງທ່ຽວ ຂອງທ້ອງຖິ່ນ ແລະ ສູນກາງ.
- ໄດ້ເສຍພັນທະຕໍ່ພາກລັດຢ່າງເປັນປົກກະຕິ ເຊັ່ນ: ເສຍອາກອນ, ພາສີ, ກອງທຶນການທ່ອງທ່ຽວ ຕາມລະບຽບ ແລະ ຕາມໄລຍະເວລາທີ່ກຳນົດໄວ້.
- ບໍ່ເຄີຍຖືກດຳເນີນຄະດີໃດໆມາກ່ອນ.
- ໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມໃນຮູບແບບຕ່າງໆ.

❖ **ການບໍລິຫານ ແລະ ຄຸ້ມຄອງ**

- ມີລະບຽບການບໍລິຫານຄຸ້ມຄອງ ແລະ ມາດຕະການທີ່ເໝາະສົມຕໍ່ຜູ້ລະເມີດ ເຊັ່ນ: ບໍ່ຂີດຂຽນໃສ່ຝາຖ້ຳ; ບໍ່ສີດສະເປໃສ່ພື້ນ, ຝາ ຫຼື ຫີນງອກຫີນຍ້ອຍ; ຫ້າມຈັບບາຍຫີນງອກຫີນຍ້ອຍ ແລະ ຝາຖ້ຳ; ຫ້າມທຳລາຍຫີນ ຫຼື ສິ່ງຂອງພາຍໃນຖ້ຳ, ຫ້າມນຳເອົາສິ່ງຂອງພາຍໃນຖ້ຳອອກໄປ; ຖິ້ມຂີ້ເຫຍື້ອຢູ່ພາຍໃນຖ້ຳ).
- ມີແຜນທີ່ການທ່ອງທ່ຽວສະເພາະພາຍໃນຖ້ຳ ແລະ ບໍລິເວນຮອບນອກຂອງຖ້ຳ.
- ມີການເກັບກຳສະຖິຕິນັກທ່ອງທ່ຽວເຂົ້າທ່ຽວຊົມຖ້ຳໃນແຕ່ລະວັນ.
- ມີຄະນະກຳມະການລົງຕິດຕາມກວດກາການໃຫ້ບໍລິການຖ້ຳຢ່າງເປັນປົກກະຕິ.
- ກຳນົດເວລາໃນການເຂົ້າທ່ຽວຊົມຖ້ຳ ແຕ່ເວລາ 8:00-17:00 ໂມງ.
- ກຳນົດຈຳນວນນັກທ່ອງທ່ຽວທີ່ເຂົ້າທ່ຽວຊົມຖ້ຳໃນແຕ່ລະຄັ້ງໃຫ້ຊັດເຈນ ອີງຕາມຄວາມສາມາດໃນການຮອງຮັບຂອງຖ້ຳ.

❖ **ການຄຸ້ມຄອງສິ່ງແວດລ້ອມ**

- ຫຼີກລ່ຽງຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມໃນການພັດທະນາພາຍໃນ ແລະ ພາຍນອກຖ້ຳ.

- ໃຫ້ຄວາມຮູ້ປະຊາຊົນທ້ອງຖິ່ນ ແລະ ນັກທ່ອງທ່ຽວກ່ຽວກັບລະບົບນິເວດຂອງຖ້ຳ, ການອະນຸລັກ ຊັບພະຍາກອນທຳມະຊາດແບບຍືນຍົງ.
- ຫຼີກລ້ຽງການນຳເອົາອາຫານ ຫຼື ເຄື່ອງດື່ມທີ່ບໍ່ຈຳເປັນເຂົ້າໄປໃນຖ້ຳ ຊຶ່ງຈະກໍ່ໃຫ້ເກີດຜົນກະທົບ ທາງດ້ານລົບຕໍ່ລະບົບນິເວດພາຍໃນຖ້ຳ.
- ຫຼີກລ່ຽງການດັງໄຟ, ໄຕ້ກະບອງ ຫລື ທຽນເຂົ້າໃນຖ້ຳ ເພາະຈະກໍ່ໃຫ້ມີຜົນກະທົບທາງສິ່ງແວດ ລ້ອມ.
- ຈັດສັນພື້ນທີ່ສຳລັບການເກັບມ້ຽນຂີ້ເຫຍື້ອ (ແບບແຍກປະເພດ) ຢູ່ບໍລິເວນດ້ານນອກຂອງຖ້ຳ.

❖ **ສິ່ງອຳນວຍຄວາມສະດວກ**

- ຖ້າມີການຕິດຕັ້ງລະບົບໄຟຟ້າ, ດອກໄຟ ແລະ ສາຍໄຟພາຍໃນຖ້ຳ ຕ້ອງແມ່ນອຸປະກອນທີ່ ໃຊ້ສຳ ລັບພາຍໃນຖ້ຳ.
- ກໍ່ສ້າງສິ່ງອຳນວຍຄວາມສະດວກພາຍໃນຖ້ຳ ເຊັ່ນ: ທາງຍ່າງ, ຮາວກັນຕົກ ຕ້ອງນຳໃຊ້ວັດສະດຸ ທີ່ ມີຄວາມກົມກືນກັບທຳມະຊາດ ແລະ ບໍ່ໃຫ້ທຳລາຍສະພາບເດີມຂອງຖ້ຳ.
- ປັບປຸງທັດສະນີຍະພາບຂອງພື້ນທີ່ໃຫ້ມີຄວາມສວຍງາມ ແລະ ກົມກືນກັບສະພາບແວດລ້ອມ ຂອງ ພື້ນທີ່.
- ມີອຸປະກອນສະໜອງໃຫ້ນັກທ່ອງທ່ຽວ ເຊັ່ນ: ໄຟສາຍ/ໂຄມໄຟ 1-2 ອັນ/ນັກທ່ອງທ່ຽວໜຶ່ງຄົນ (ແລ້ວແຕ່ຂະໜາດຂອງຖ້ຳ), ໝວກກັນກະທົບ, ອຸປະກອນປະຖົມພະຍາບານຂັ້ນຕົ້ນ.
- ມີຕູ້ມ້ຽນເຄື່ອງສຳລັບນັກທ່ອງທ່ຽວ.
- ສຳລັບຖ້ຳມີນ້ຳຕ້ອງມີເສື້ອຊູຊີບ, ກົງເບັ້ງ, ເຮືອ ແລະ ອຸປະກອນອື່ນໆທີ່ຈຳເປັນ.

❖ **ບຸກຄະລາກອນ**

- ມີໂຄງຮ່າງການຈັດຕັ້ງ ແລະ ແບ່ງໜ້າທີ່ຄວາມຮັບຜິດຊອບທີ່ຊັດເຈນ.
- ມີລະບຽບການ ແລະ ນະໂຍບາຍຕໍ່ພະນັກງານທີ່ເຮັດວຽກຢູ່ສະຖານທີ່ດັ່ງກ່າວ.
- ພະນັກງານ ແລະ ປະຊາຊົນທີ່ໃກ້ຄຽງຕ້ອງໄດ້ຮັບການຝຶກອົບຮົມຫົວຂໍ້ຕ່າງໆກ່ຽວ ກັບການ ບໍລິການ ເປັນແຕ່ລະໄລຍະ ແລະ ຕາມຄວາມເໝາະສົມ.
- ພະນັກງານນຳທ່ຽວຖ້ຳຕ້ອງມີຄວາມຮູ້ໃນການປະຖົມພະຍາບານຂັ້ນຕົ້ນ.
- ພະນັກງານນຳທ່ຽວຖ້ຳຕ້ອງຮູ້ປະຫວັດຄວາມເປັນມາຂອງພື້ນທີ່ ແລະ ສາມາດອະທິບາຍໃຫ້ນັກ ທ່ອງທ່ຽວໄດ້.

❖ **ການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ**

- ມີສ່ວນຮ່ວມໃນການປຶກສາຫາລື, ວາງແຜນ ຫຼື ຄຸ້ມຄອງສະຖານທີ່ທ່ອງທ່ຽວ.
- ມີສ່ວນຮ່ວມໃນການປົກປັກຮັກສາສະຖານທີ່ທ່ອງທ່ຽວ.
- ມີການຈັດຕັ້ງກຸ່ມໃຫ້ບໍລິການແກ່ນັກທ່ອງທ່ຽວ ໂດຍປະຊາຊົນມີສ່ວນຮ່ວມ.
- ມີລາຍຮັບການແບ່ງປັນຜົນປະໂຫຍດທີ່ເປັນທຳຈາກການໃຫ້ບໍລິການ ແລະ ກິດຈະກຳຕ່າງໆ.

❖ **ຄວາມປອດໄພ**

- ໃຫ້ຄວາມຮູ້ແກ່ນັກທ່ອງທ່ຽວກ່ຽວກັບຄວາມປອດໄພ ເຊັ່ນ: ຂໍ້ຫ້າມ ແລະ ກົດລະບຽບຕ່າງໆ.
- ຕິດຕັ້ງປ້າຍຫ້າມ, ປ້າຍເຕືອນ ແລະ ປ້າຍຊີ້ບອກໃຫ້ພຽງພໍ ແລະ ມີຄວາມເໝາະສົມ.
- ຖ້າອາກາດບໍ່ດີ ເຊັ່ນ: ຝົນຕົກ ບໍ່ຄວນເຂົ້າທ່ຽວຖ້ຳ ເພາະອາດຈະເກີດນ້ຳຖ້ວມໄດ້ (ໂດຍສະເພາະຖ້ຳທີ່ມີນ້ຳ).
- ຕ້ອງຍ່າງຕາມເສັ້ນທາງທີ່ກຳນົດໃຫ້, ບໍ່ໃຫ້ນັ່ງ, ປີນ ຫລື ຢຽບເທິງກ້ອນຫີນ.
- ມີອຸປະກອນເຄື່ອງປະຖົມພະຍາບານຂັ້ນຕົ້ນ ປະຈຳທີ່ ຫຼື ໃຫ້ພະນັກງານນຳທ່ຽວຖືໄປນຳ.
- ເວລາທ່ຽວຖ້ຳຕ້ອງສະໜອງອຸປະກອນໃຫ້ນັກທ່ອງທ່ຽວ ເຊັ່ນ: ໄຟສາຍ/ໂຄມໄຟ 1-2 ອັນ/ນັກທ່ອງທ່ຽວໜຶ່ງຄົນ (ແລ້ວແຕ່ຂະໜາດຂອງຖ້ຳ), ໝວກກັນກະທົບ, ອຸປະກອນປະຖົມພະຍາບານຂັ້ນຕົ້ນ.
- ສຳລັບຖ້ຳທີ່ບໍ່ໄດ້ໃຫ້ບໍລິການ, ຕ້ອງປິດປະຕູ ແລະ ໃສ່ປ້າຍຫ້າມ.
- ຕ້ອງມີແຜນຮັບມືກັບຄວາມສ່ຽງທີ່ອາດຈະເກີດຂຶ້ນ.
- ຕ້ອງກຳນົດຈຳນວນຄົນ ເຂົ້າທ່ຽວຊົມພາຍໃນຖ້ຳ ບໍ່ໃຫ້ເກີນຈັກຄົນ/ຄັ້ງ. ເພາະບາງຖ້ຳ ອາດມີອາກາດຫາຍໃຈບໍ່ພຽງພໍ, ຖ້າຫາກປ່ອຍໃຫ້ນັກທ່ອງທ່ຽວເຂົ້າຫຼາຍເກີນໄປ ອາດຈະເຮັດໃຫ້ຫາຍໃຈບໍ່ສະດວກ.

### 2.1.2 ເງື່ອນໄຂຂອງຖ້ຳທີ່ຈະພັດທະນາເປັນສະຖານທີ່ທ່ອງທ່ຽວ

- ເປັນຖ້ຳທີ່ມີຄວາມອຸດົມສົມບູນ, ຄວາມສວຍງາມ ແລະ ໂດດເດັ່ນ (ຫີນງອກ, ຫີນຍ້ອຍ, ອາກາດຖ່າຍເທສະດວກດີ.
- ມີຄວາມສາມາດໃນການຮອງຮັບຈຳນວນນັກທ່ອງທ່ຽວ.
- ມີຄວາມສະດວກໃນການເຂົ້າເຖິງ ແລະ ການທ່ຽວຊົມພາຍໃນຖ້ຳ.
- ຖ້ຳຕ້ອງໄດ້ຮັບການພັດທະນາ ແລະ ມີສິ່ງອຳນວຍຄວາມສະດວກກ່ອນຈະເປີດໃຫ້ການບໍລິການ.

### 2.1.3 ເງື່ອນໄຂສຳລັບນັກທ່ອງທ່ຽວ

- ກ່ອນເຂົ້າຖ້ຳຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ (ພະນັກງານປະຈຳຢູ່ຖ້ຳ).

- ການເຂົ້າຊົມຖໍ້າ ຕ້ອງມີຄົນຕິດຕາມ, ຫຼືກ່ຽງເຂົ້າໄປຄົນດຽວໂດຍທີ່ບໍ່ມີໃຜຮັບຮູ້.
- ຕ້ອງມີພະນັກງານນໍາທ່ຽວເວລາທ່ຽວຊົມຖໍ້າ.
- ຟັງການແນະນໍາຈາກພະນັກງານນໍາທ່ຽວຢ່າງລະອຽດກ່ອນເຂົ້າຖໍ້າ ແລະ ມີອຸປະກອນຄົບຖ້ວນ.
- ຄວນໃຊ້ສຽງໃນລະດັບທີ່ພໍດີ (ບໍ່ໃຊ້ສຽງດັງ) ເພາະຈະເປັນການລົບກວນນັກທ່ອງທ່ຽວຄົນອື່ນ.
- ການສູບຢາພາຍໃນຖໍ້າ ຈະເຮັດໃຫ້ລະບົບນິເວດພາຍໃນຖໍ້າຖືກທໍາລາຍ.
- ຫ້າມນໍາອາຫານເຂົ້າໄປຮັບປະທານໃນຖໍ້າ ຈະເຮັດໃຫ້ລະບົບນິເວດພາຍໃນຖໍ້າຖືກທໍາລາຍ.
- ບໍ່ຂີດ, ຂຽນ ຫຼື ແຕ້ມຮູບຕ່າງໆໃສ່ພາຍໃນຖໍ້າ ແລະ ນອກຖໍ້າ ຊຶ່ງຈະເປັນການທໍາລາຍສະພາບຂອງຖໍ້າໂດຍກົງ.
- ຫ້າມບໍ່ໃຫ້ຫັກ, ທຸບເອົາຫີນງອກ, ຫີນຍ້ອຍ.
- ຕ້ອງປະຕິບັດຕາມລະບຽບຄວາມປອດໄພໃນການເຂົ້າທ່ຽວຊົມພາຍໃນຖໍ້າ (ໃສ່ໝວກ, ໄຟສາຍ)
- ຕ້ອງສຶກສາຂໍ້ມູນ ແລະ ແຜນທີ່ເຂົ້າ-ອອກ ຂອງຖໍ້າລະອຽດກ່ອນເຂົ້າ.

## 2.2 ການປະເມີນບັນດາເງື່ອນໄຂ ແລະ ເກນໃຫ້ຄະແນນ

**+ ຕາຕະລາງເງື່ອນໄຂ**

| | ບັນດາເງື່ອນໄຂ | ມີ | ບໍ່ມີ |
|---|---|---|---|
| I | **ເງື່ອນໄຂສໍາລັບຜູ້ປະກອບການ** | | |
| 1.1 | **ການດໍາເນີນທຸລະກິດການທ່ອງທ່ຽວ (6)** | | |
| 1 | ຜູ້ປະກອບການຕ້ອງມີໃບທະບຽນວິສະຫະກິດ, ໃບອະນຸຍາດດໍາເນີນທຸລະກິດ, ໃບຢັ້ງຢືນການນໍາໃຊ້ທີ່ດິນ, ໃບຢັ້ງຢືນສິ່ງແວດລ້ອມ ແລະ ປະກັນໄພ ທີ່ຖືກຕ້ອງຈາກພາກສ່ວນທີ່ກ່ຽວຂ້ອງ | | |
| 2 | ມີແຜນພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວ | | |
| 3 | ໄດ້ຈັດຕັ້ງປະຕິບັດກິດຈະກໍາຕ່າງໆ ໃຫ້ສອດຄ່ອງກັບແຜນພັດທະນາການທ່ອງທ່ຽວ | | |
| 4 | ໄດ້ເສຍພັນທະຕໍ່ພາກລັດຢ່າງເປັນປົກກະຕິ ເຊັ່ນ: ເສຍອາກອນ, ພາສີ, ກອງທຶນການທ່ອງທ່ຽວ ແລະ ອື່ນໆຕາມລະບຽບ ແລະ ໄລຍະເວລາທີ່ກໍານົດໄວ້ | | |
| 5 | ບໍ່ເຄີຍຖືກດໍາເນີນຄະດີໃດໆມາກ່ອນ | | |
| 6 | ໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມໃນຮູບແບບຕ່າງໆ | | |
| 1.2 | **ການບໍລິຫານ ແລະ ຄຸ້ມຄອງ (5)** | | |
| 1 | ມີລະບຽບການບໍລິຫານຄຸ້ມຄອງ ແລະ ມາດຕະການທີ່ເໝາະສົມຕໍ່ຜູ້ລະເມີດ ເຊັ່ນ: ບໍ່ຂີດຂຽນໃສ່ຝາຖໍ້າ, ສີດສະເປ ໃສ່ພື້ນ, ຝາ ຫຼື ຫີນງອກຫີນຍ້ອຍ, ຫ້າມຈັບບາຍຫີນ | | |

| | | | |
|---|---|---|---|
| | ງອກຫີນຍ້ອຍ ແລະ ຝາຖໍ້າ, ທຳລາຍຫີນ ຫລື ສິ່ງຂອງພາຍຖໍ້າ, ຖິ້ມຂີ້ເຫຍື້ອຊະຊາຍພາຍໃນຖໍ້າ) | | |
| 2 | ມີແຜນທີ່ການທ່ອງທ່ຽວສະເພາະພາຍໃນຖໍ້າ ແລະ ນອກຖໍ້າ | | |
| 3 | ມີການເກັບກຳສະຖິຕິນັກທ່ອງທ່ຽວເຂົ້າທ່ຽວຊົມຖໍ້າໃນແຕ່ລະວັນ | | |
| 4 | ມີຄະນະກຳມະການລົງຕິດຕາມກວດການໃຫ້ບໍລິການຖໍ້າຢ່າງເປັນປົກກະຕິ | | |
| 5 | ກຳນົດເວລາໃນການເຂົ້າທ່ຽວຊົມຖໍ້າ ແຕ່ເວລາ 8:00-17:00 ໂມງ | | |
| **1.3** | **ການຄຸ້ມຄອງສິ່ງແວດລ້ອມ (5)** | | |
| 1 | ຫຼີກລ່ຽງຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມໃນການພັດທະນາພາຍໃນ ແລະ ພາຍນອກຖໍ້າ, ຈັດສັນພື້ນທີ່ສຳລັບການເກັບມ້ຽນຂີ້ເຫຍື້ອ (ແບບແຍກປະເພດ) ຢູ່ບໍລິເວນຖໍ້າ | | |
| 2 | ໃຫ້ຄວາມຮູ້ແກ່ນັກທ່ອງທ່ຽວກ່ຽວກັບລະບົບນິເວດຂອງຖໍ້າ, ການອະນຸລັກຊັບພະຍາກອນທຳມະຊາດແບບຍືນຍົງ | | |
| 3 | ຫຼີກລ່ຽງການນຳເອົາອາຫານ ຫຼື ເຄື່ອງດື່ມທີ່ບໍ່ຈຳເປັນເຂົ້າໄປໃນຖໍ້າ ຊຶ່ງຈະກໍໃຫ້ເກີດຜົນກະທົບທາງລົບຕໍ່ລະບົບນິເວດພາຍໃນຖໍ້າ | | |
| 4 | ຫຼີກລ່ຽງການດັງໄຟ, ໄຕ້ກະບອງ, ຫລື ທຽນເຂົ້າໃນຖໍ້າ ເພາະຈະກໍ່ໃຫ້ມີຜົນກະທົບທາງສິ່ງແວດລ້ອມ | | |
| 5 | ຈັດສັນພື້ນທີ່ສຳລັບການເກັບມ້ຽນຂີ້ເຫຍື້ອ (ແບບແຍກປະເພດ) ຢູ່ບໍລິເວນຖໍ້າ | | |
| **1.4** | **ສິ່ງອຳນວຍຄວາມສະດວກ (6)** | | |
| 1 | ຕິດຕັ້ງລະບົບໄຟຟ້າພາຍໃນຖໍ້າ: ດອກໄຟ ແລະ ສາຍໄຟ ຕ້ອງໄດ້ມາດຕະຖານ | | |
| 2 | ກໍ່ສ້າງສິ່ງອຳນວຍຄວາມສະດວກພາຍໃນຖໍ້າ ເຊັ່ນ: ທາງຍ່າງ, ຮົ້ວກັນຕົກ ຕ້ອງນຳໃຊ້ວັດສະດຸທີ່ມີຄວາມກົມກືນກັບທຳມະຊາດ ແລະ ບໍ່ໃຫ້ທຳລາຍສະພາບເດີມຂອງຖໍ້າ | | |
| 3 | ປັບປຸງທັດສະນີຍະພາບຂອງພື້ນທີ່ໃຫ້ມີຄວາມສວຍງາມ ແລະ ກົມກືນກັບສະພາບແວດລ້ອມຂອງພື້ນທີ່ | | |
| 4 | ມີອຸປະກອນສະໜອງໃຫ້ນັກທ່ອງທ່ຽວ ເຊັ່ນ: ໄຟສາຍ/ໂຄມໄຟ 1-2 ອັນ/ນັກທ່ອງທ່ຽວໜຶ່ງຄົນ (ແລ້ວແຕ່ຂະໜາດຂອງຖໍ້າ), ໝວກກັນກະທົບ, ອຸປະກອນປະຖົມພະຍາບານຂັ້ນຕົ້ນ, | | |
| 5 | ມີຕູ້ມ້ຽນເຄື່ອງສຳລັບນັກທ່ອງທ່ຽວ | | |
| 6 | ສຳລັບຖໍ້າມີນໍ້າຕ້ອງມີເສື້ອຊູຊີບ, ກົງເບັງ, ເຮືອ… | | |
| **1.5** | **ບຸກຄະລາກອນ (5)** | | |
| 1 | ມີໂຄງຮ່າງການຈັດຕັ້ງ ແລະ ແບ່ງໜ້າທີ່ຄວາມຮັບຜິດຊອບທີ່ຊັດເຈນ | | |

| | | | |
|---|---|---|---|
| 2 | ມີລະບຽບການ ແລະ ນະໂຍບາຍຕໍ່ພະນັກງານທີ່ເຮັດວຽກຢູ່ສະຖານທີ່ດັ່ງກ່າວ | | |
| 3 | ພະນັກງານ ແລະ ປະຊາຊົນທີ່ໃກ້ຄຽງຕ້ອງໄດ້ຮັບການຝຶກອົບຮົມຫືອຂໍ້ຕ່າງໆກ່ຽວກັບການບໍລິການ ເປັນແຕ່ລະໄລຍະ ແລະ ຕາມຄວາມເໝາະສົມ | | |
| 4 | ພະນັກງານນໍາທ່ຽວຖໍ້າຕ້ອງມີຄວາມຮູ້ໃນການປະຖົມພະຍາບານຂັ້ນຕົ້ນ | | |
| 5 | ພະນັກງານນໍາທ່ຽວຖໍ້າຕ້ອງຮູ້ປະຫວັດຄວາມເປັນມາຂອງພື້ນທີ່ ແລະ ສາມາດອະທິບາຍໃຫ້ນັກທ່ອງທ່ຽວໄດ້ | | |
| **1.6** | **ການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ (4)** | | |
| 1 | ມີສ່ວນຮ່ວມໃນການປຶກສາຫາລື, ວາງແຜນ ຫຼື ຄຸ້ມຄອງສະຖານທີ່ທ່ອງທ່ຽວ | | |
| 2 | ມີສ່ວນຮ່ວມໃນການປົກປັກຮັກສາສະຖານທີ່ທ່ອງທ່ຽວ | | |
| 3 | ມີການຈັດຕັ້ງກຸ່ມໃຫ້ບໍລິການແກ່ນັກທ່ອງທ່ຽວ ໂດຍປະຊາຊົນມີສ່ວນຮ່ວມ | | |
| 4 | ມີລາຍຮັບການແບ່ງປັນຜົນປະໂຫຍດທີ່ເປັນທໍາຈາກການໃຫ້ບໍລິການ ແລະ ກິດຈະກໍາຕ່າງໆ | | |
| **1.7** | **ຄວາມປອດໄພ (8)** | | |
| 1 | ໃຫ້ຄວາມຮູ້ແກ່ນັກທ່ອງທ່ຽວກ່ຽວກັບຄວາມປອດໄພ ເຊັ່ນ: ຂໍ້ຫ້າມ ແລະ ກົດລະບຽບຕ່າງໆ | | |
| 2 | ຕິດຕັ້ງປ້າຍຫ້າມ, ປ້າຍເຕືອນ ແລະ ປ້າຍຊີ້ບອກໃຫ້ພຽງພໍ ແລະ ມີຄວາມເໝາະສົມ | | |
| 3 | ຖ້າອາກາດບໍ່ດີ ເຊັ່ນ: ຝົນຕົກ ບໍ່ຄວນເຂົ້າທ່ຽວຖໍ້າ ເພາະອາດຈະເກີດນໍ້າຖ້ວມໄດ້ (ໂດຍສະເພາະຖໍ້າທີ່ມີນໍ້າ) | | |
| 4 | ຍ່າງຕາມເສັ້ນທາງທີ່ກໍານົດໃຫ້, ບໍ່ໃຫ້ນັ່ງ, ປີນ ຫລື ຢຽບເທິງກ້ອນຫີນ | | |
| 5 | ມີອຸປະກອນເຄື່ອງປະຖົມພະຍາບານຂັ້ນຕົ້ນ ປະຈໍາທີ່ ຫຼື ໃຫ້ພະນັກງານນໍາທ່ຽວຖືໄປນໍາ | | |
| 6 | ເວລາທ່ຽວຖໍ້າຕ້ອງສະໜອງອຸປະກອນໃຫ້ນັກທ່ອງທ່ຽວ ເຊັ່ນ: ໄຟສາຍ/ໂຄມໄຟ 1-2 ອັນ/ນັກທ່ອງທ່ຽວໜຶ່ງຄົນ (ແລ້ວແຕ່ຂະໜາດຂອງຖໍ້າ), ໝວກກັນກະທົບ, ອຸປະກອນປະຖົມພະຍາບານຂັ້ນຕົ້ນ | | |
| 7 | ສໍາລັບຖໍ້າທີ່ບໍ່ໄດ້ໃຫ້ບໍລິການ, ຕ້ອງປິດປະຕູ ແລະ ໃສ່ປ້າຍຫ້າມ | | |
| 8 | ຕ້ອງມີແຜນຮັບມືກັບຄວາມສ່ຽງທີ່ອາດຈະເກີດຂຶ້ນ | | |
| **2.1** | **ເງື່ອນໄຂຂອງຖໍ້າທີ່ຈະພັດທະນາເປັນສະຖານທີ່ທ່ອງທ່ຽວ (4)** | | |
| 1 | ເປັນຖໍ້າທີ່ມີຄວາມອຸດົມສົມບູນ, ຄວາມສວຍງາມ ແລະ ໂດດເດັ່ນ (ຫີນງອກ, ຫີນຍ້ອຍ, ອາກາດຖ່າຍເທສະດວກດີ) | | |
| 2 | ມີຄວາມສາມາດໃນການຮອງຮັບຈໍານວນນັກທ່ອງທ່ຽວ | | |
| 3 | ມີຄວາມສະດວກໃນການເຂົ້າເຖິງ ແລະ ການທ່ຽວຊົມພາຍໃນຖໍ້າ | | |

| | | | |
|---|---|---|---|
| 4 | ຖ້ຳຕ້ອງໄດ້ຮັບການພັດທະນາ ແລະ ມີສິ່ງອຳນວຍຄວາມສະດວກກ່ອນຈະເປີດໃຫ້ການບໍລິການ | | |
| 2.2 | **ເງື່ອນໄຂສຳລັບນັກທ່ອງທ່ຽວ (11)** | | |
| 1 | ກ່ອນເຂົ້າຖ້ຳຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ (ພະນັກງານປະຈຳຢູ່ຖ້ຳ) | | |
| 2 | ການເຂົ້າຊົມຖ້ຳ ຕ້ອງມີຄົນຕິດຕາມ, ຫຼີກລ້ຽງເຂົ້າໄປຄົນດຽວໂດຍທີ່ບໍ່ມີໃຜຮັບຮູ້ | | |
| 3 | ຕ້ອງມີພະນັກງານນຳທ່ຽວເວລາທ່ຽວຊົມຖ້ຳ | | |
| 4 | ຟັງການແນະນຳຈາກພະນັກງານນຳທ່ຽວຢ່າງລະອຽດກ່ອນເຂົ້າຖ້ຳ ແລະ ມີອຸປະກອນຄົບຖ້ວນ | | |
| 5 | ຄວນໃຊ້ສຽງໃນລະດັບທີ່ພໍດີ (ບໍ່ໃຊ້ສຽງດັງ) ເພາະຈະເປັນການລົບກວນນັກທ່ອງທ່ຽວຄົນອື່ນ | | |
| 6 | ການສູບຢາພາຍໃນຖ້ຳ ຈະເຮັດໃຫ້ລະບົບນິເວດພາຍໃນຖ້ຳຖືກທຳລາຍ | | |
| 7 | ຫ້າມນຳອາຫານເຂົ້າໄປຮັບປະທານໃນຖ້ຳ ຈະເຮັດໃຫ້ລະບົບນິເວດພາຍໃນຖ້ຳຖືກທຳລາຍ | | |
| 8 | ບໍ່ຂີດ, ຂຽນ ຫຼື ແຕ້ມຮູບຕ່າງໆໃສ່ພາຍໃນຖ້ຳ ແລະ ນອກຖ້ຳ ຊຶ່ງຈະເປັນການທຳລາຍສະພາບຂອງຖ້ຳໂດຍກົງ | | |
| 9 | ຫ້າມບໍ່ໃຫ້ຫັກ, ທຸບເອົາຫີນງອກ, ຫີນຍ້ອຍ | | |
| 10 | ຕ້ອງປະຕິບັດຕາມລະບຽບຄວາມປອດໄພໃນການເຂົ້າທ່ຽວຊົມພາຍໃນຖ້ຳ (ໃສ່ໝວກ, ໄຟສາຍ...) | | |
| 11 | ຕ້ອງສຶກສາຂໍ້ມູນ ແລະ ແຜນທີ່ເຂົ້າ-ອອກຂອງຖ້ຳລະອຽດກ່ອນເຂົ້າ | | |
| | **ລວມຄະແນນທັງໝົດມີ 54 ຄະແນນ** | | |

❖ **ວິທີຄິດໄລ່ຄະແນນ**

- ສຳລັບການໃຫ້ຄະແນນ ແມ່ນທາງບັນດາຄະນະກຳການຂັ້ນສູນກາງ ແລະ ຂັ້ນແຂວງ ຈະໄດ້ໃສ່ເຄື່ອງໝາຍ (√) ໃນຫ້ອງຄະແນນທີ່ກຳນົດໄວ້ໃນຕາຕະລາງດັ່ງຂ້າງເທິງຕາມຄວາມເໝາະສົມ.
- **ໝາຍເຫດ:** ບາງຄຳຖາມອາດຈະຕອບ "ບໍ່ມີ" ແຕ່ບໍ່ໝາຍຄວາມວ່າບໍ່ໄດ້ຄະແນນ (ອີງໃສ່ຮູບແບບຄຳຖາມ)

❖ **ການຈັດເກນໃຫ້ຄະແນນ**

- ມາດຕະຖານສະບັບນີ້ມີທັງໝົດ 54 ເງື່ອນໄຂ ຫຼື ເທົ່າກັບ 54 ຄະແນນ (100 ເປີເຊັນ)

- ບັນດາແຂວງ/ຜູ້ປະກອບການສະຖານທີ່ທ່ອງທ່ຽວທາງຖໍ້າ ທີ່ໄດ້ຄະແນນຢ່າງໜ້ອຍ 38 ຄະແນນ ຂຶ້ນໄປ ຫຼື 70% ຂອງຄະນະລວມທັງໝົດຈຶ່ງຈະໄດ້ຮັບການຢັ້ງຢືນມາດຕະຖານກິດຈະກໍາການທ່ອງທ່ຽວທາງຖໍ້າ.
- ບັນດາແຂວງ/ຜູ້ປະກອບການ ຈະໄດ້ຮັບໃບຢັ້ງຢືນ ແລະ ແຜ່ນປ້າຍມາດຕະຖານ

## 2.3 ການອອກໃບຢັ້ງຢືນ

1. ການຢັ້ງຢືນຈະໄດ້ຖືກດໍາເນີນໂດຍ ຄະນະກໍາມະການປະເມີນມາດຕະຖານກິດຈະກໍາການທ່ອງທ່ຽວທາງຖໍ້າ (ຂັ້ນແຂວງ) ທີ່ໄດ້ຮັບການແຕ່ງຕັ້ງ.
2. ພາກທຸລະກິດ/ຜູ້ປະກອບການ ທີ່ເຫັນວ່າສະຖານທີ່ທ່ອງທ່ຽວດັ່ງກ່າວມີເງື່ອນໄຂສາມາດນໍາສະເໜີເພື່ອຂໍຮັບການຢັ້ງຢືນ.
3. ຄະນະກໍາມະການມາດຕະຖານກິດຈະກໍາການຂັ້ນແຂວງ ຈະໄດ້ລົງກວດການ ແລະ ປະເມີນ.
4. ຄະນະກໍາມະການຂັ້ນແຂວງ ສ້າງບົດລາຍງານ ແລະ ຮັບຮອງເອົາຜົນການປະເມີນ.
5. ພາຍຫຼັງສະຖານທ່ອງທ່ຽວທີ່ໄດ້ຕາມມາດຕະຖານ ແລະ ໄດ້ເງື່ອນໄຂຄົບຖ້ວນແລ້ວ, ຄະນະກໍາມະການຂັ້ນແຂວງຈະໄດ້ອອກໃບຢັ້ງຢືນ ແລະ ແຜນປ້າຍມາດຕະຖານ.
6. ໄລຍະເວລາຂອງໃບຢັ້ງຢືນກໍານົດ 2 ປີ
7. ສະຖານທີ່ທ່ອງທ່ຽວທີ່ໄດ້ຮັບການຢັ້ງຢືນແລ້ວ; ທຸກໆ 2 ປີຈຶ່ງຕ້ອງໄດ້ປະເມີນຄືນ.

# ພາກທີ III: ມາດຕະການໃນການຈັດຕັ້ງປະຕິບັດ, ນະໂຍບາຍ ແລະ ມາດຕະການຕໍ່ຜູ້ລະເມີດ

ເພື່ອເຮັດໃຫ້ມາດຕະຖານສະບັບນີ້ໄດ້ຮັບຜົນດີ ແລະ ມີປະສິດທິພາບສູງ, ແຕ່ລະພາກສ່ວນຕ້ອງໄດ້ພ້ອມກັນເອົາໃຈ ໃສ່ຈັດຕັ້ງປະຕິບັດຢ່າງມີຈຸດສຸມ ເພື່ອໃຫ້ບັນລຸເປົ້າໝາຍຕາມມາດຕະຖານທີ່ວາງໄວ້ແນໃສ່ການພັດທະນາ ແລະ ຄຸ້ມຄອງໃຫ້ມີ ຄວາມຍືນຍົງ ພ້ອມທັງຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ.

ມາດຕະຖານສະບັບນີ້ຕ້ອງເຜີຍແຜ່ໃຫ້ພາກສ່ວນຕ່າງໆທັງພາກລັດ, ພາກທຸລະກິດ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນຮັບຮູ້ຢ່າງກວ້າງຂວາງ ແລະ ເລິກເຊິ່ງດ້ວຍຫຼາຍຮູບແບບ.

## 3.1 ການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງ ສາມາດດຳເນີນດ້ວຍຮູບແບບໃດໜຶ່ງ ດັ່ງນີ້:

### 3.1.1. ການປະນີປະນອມ

ໃນກໍລະນີເກີດມີຂໍ້ຂັດແຍ່ງໃນການດຳເນີນທຸລະກິດກ່ຽວກັບຖໍ້າ ຄູ່ກໍລະນີຕ້ອງປຶກສາຫາລືເຈລະຈາຫາທາງອອກຮ່ວມ ກັນ ແລະ ປະນີປະນອມກັນ.

### 3.1.2. ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີເກີດມີຂໍ້ຂັດແຍ່ງໃນການດຳເນີນທຸລະກິດກ່ຽວກັບຖໍ້າ ຄູ່ກໍລະນີມີສິດສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ.

### 3.3.3. ການແກ້ໄຂທີ່ມີລັກສະນະສາກົນ

ໃນການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການດຳເນີນທຸລະກິດການທ່ອງທ່ຽວ ລະຫວ່າງຜູ້ດຳເນີນທຸລະກິດການທ່ອງທ່ຽວ ກັບຜູ້ໃຊ້ບໍລິການທ່ອງທ່ຽວ ຫຼື ຄູ່ກໍລະນີ ສາມາດສະເໜີຕໍ່ພາກສ່ວນແກ້ໄຂຂໍ້ຂັດແຍ່ງພາຍໃນ ຫຼື ຕ່າງປະເທດຕາມ ການຕົກລົງກັນ ຫຼື ໃຫ້ປະຕິບັດຕາມສົນທິສັນຍາ.

## 3.2 ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### 3.2.1 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ຜູ້ປະກອບການ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດມາດຕະຖານສະບັບນີ້ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆຕາມລະບຽບ.

### 3.2.2 ມາດຕະການຕໍ່ຜູ້ລະເມີດ

- ບຸກຄົນ ຫຼື ຜູ້ປະກອບການ ທີ່ໄດ້ລະເມີດມາດຕະຖານສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໄໝ, ໃຊ້ແທນຄ່າເສຍຫາຍ ຫຼື ລົງໂທດຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.
- ຖ້າບຸກຄົນໃດລະເມີດຕໍ່ກົດລະບຽບຄັ້ງທີໜຶ່ງ ຈະໄດ້ຖືກສຶກສາອົບຮົມ, ຕັກເຕືອນພ້ອມຂຽນ ບົດບັນທຶກສຶກສາອົບຮົມ ແລະ ປັບໄໝແຕ່ 10.000.000 ຫາ 20.000.000 ກີບ.

– ປັບໄໝຄັ້ງທີສອງ ແຕ່ 20.000.000 ຫາ 30.000.000 ກີບ ຂຽນບົດບັນທຶກກ່າວເຕືອນ ພ້ອມທັງ ໃຫ້ຢຸດຕິການບໍລິການກິດຈະກໍາການທ່ອງທ່ຽວ.

## ເອກະສານຊ້ອນທ້າຍ

**ຕາຕະລາງສັງລວມລາຍຊື່ສະຖານທີ່ທ່ອງທ່ຽວທາງຖ້ຳຢູ່ເມືອງວັງວຽງ, ແຂວງວຽງຈັນ**

| ລ/ດ | ລາຍຊື່ສະຖານທີ່ທ່ອງທ່ຽວ | ບ້ານ | ເມືອງ | ແຂວງ |
|---|---|---|---|---|
| 1 | ສະຖານທີ່ທີ່ທ່ອງທ່ຽວຈຸດຊົມວິວ ຜາຖ້ຳນອນເນເວີແລນ | ຫ້ວຍສະເຫງົ້າ | ວັງວຽງ | ວຽງຈັນ |
| 2 | ສະຖານທີ່ທ່ອງທ່ຽວຖ້ຳຈັງ | ເມືອງຊອງ | ວັງວຽງ | ວຽງຈັນ |
| 3 | ສະຖານທີ່ທ່ອງທ່ຽວຖ້ຳນ້ຳ, ຖ້ຳຫອຍ, ຖ້ຳຫຼຸບ | ນາດາວ | ວັງວຽງ | ວຽງຈັນ |
| 4 | ສະຖານທີ່ທ່ອງທ່ຽວຖ້ຳປູຄຳ | ນາທອງ | ວັງວຽງ | ວຽງຈັນ |
| 5 | ສະຖານທີ່ທ່ອງທ່ຽວຖ້ຳອ່າງຫຼວງ | ນາມ່ວງ | ວັງວຽງ | ວຽງຈັນ |
| 6 | ສະຖານທີ່ທ່ອງທ່ຽວຖ້ຳນາງອື້ວຄ່ຽມ | ນາລ້ອງກວ່າງ | ວັງວຽງ | ວຽງຈັນ |
| 7 | ສະຖານທີ່ທ່ອງທ່ຽວຖ້ຳນາຍຮ້ອຍ | ນາລ້ອງກວ່າງ | ວັງວຽງ | ວຽງຈັນ |
| 8 | ສະຖານທີ່ທ່ອງທ່ຽວຖ້ຳປ່າຕອງ ແລະ ບໍ່ນ້ຳບຸ້ນ | ນາໄຊ | ວັງວຽງ | ວຽງຈັນ |
| 9 | ສະຖານທີ່ທ່ອງທ່ຽວທຳມະຊາດຖ້ຳນ້ຳບຸ້ນ | ນາໄຊ | ວັງວຽງ | ວຽງຈັນ |
| 10 | ສະຖານທີ່ທ່ອງທ່ຽວຖ້ຳຊ້າງຄຳ | ນ້ຳແປ | ວັງວຽງ | ວຽງຈັນ |
| 11 | ສະຖານທີ່ທ່ອງທ່ຽວຖ້ຳຫ້ວຍຫອຍຄຳ | ນ້ຳແປ | ວັງວຽງ | ວຽງຈັນ |
| 12 | ສະຖານທີ່ທ່ອງທ່ຽວຖ້ຳຜາປວກ, ຖ້ຳພະລືສີ | ສະຫວ່າງ | ວັງວຽງ | ວຽງຈັນ |
| 13 | ສະຖານທີ່ທ່ອງທ່ຽວຖ້ຳນາງຜົມຫອມ | ແກ່ວກວ້າງ | ວັງວຽງ | ວຽງຈັນ |
| 14 | ສະຖານທີ່ທ່ອງທ່ຽວຖ້ຳນອນ | ຫ້ວຍສະເຫງົ້າ | ວັງວຽງ | ວຽງຈັນ |
| 15 | ສະຖານທີ່ທ່ອງທ່ຽວຖ້ຳລົມ | ຫ້ວຍສະເຫງົ້າ | ວັງວຽງ | ວຽງຈັນ |
| 16 | ສະຖານທີ່ທີ່ທ່ອງທ່ຽວຖ້ຳນ້ຳແຖມ, ຖ້ຳຜາລາຍ, ຖ້ຳທັດທາ | ປາກເປາະ | ວັງວຽງ | ວຽງຈັນ |
| 17 | ສະຖານທີ່ທ່ອງທ່ຽວຖ້ຳຂັນຄຳ | ຫ້ວຍແຍ້ | ວັງວຽງ | ວຽງຈັນ |
| 18 | ສະຖານທີ່ທ່ອງທ່ຽວຖ້ຳນ້ຳບໍ່ແກ້ວ | ຫ້ວຍແຍ້ | ວັງວຽງ | ວຽງຈັນ |
| 19 | ສະຖານທີ່ທ່ອງທ່ຽວຖ້ຳຈີນນາລີ | ຫ້ວຍແຍ້ | ວັງວຽງ | ວຽງຈັນ |
| 20 | ສະຖານທີ່ທ່ອງທ່ຽວຖ້ຳຫົງຜັກໄຂ່ | ໂພນສູງ | ວັງວຽງ | ວຽງຈັນ |
| 21 | ສະຖານທີ່ທ່ອງທ່ຽວຖ້ຳຜາຄຳ | ໂພນເງິນ | ວັງວຽງ | ວຽງຈັນ |
| 22 | ສະຖານທີ່ທ່ອງທ່ຽວຖ້ຳດອກເງິນ | ນາຊົມ | ວັງວຽງ | ວຽງຈັນ |
| 23 | ສະຖານທີ່ທ່ອງທ່ຽວຖ້ຳພູທອງ | ນາທອງ | ວັງວຽງ | ວຽງຈັນ |
| 24 | ສະຖານທີ່ທ່ອງທ່ຽວຖ້ຳແກ້ວ | ຜາເທົ່າ | ວັງວຽງ | ວຽງຈັນ |
| 25 | ສະຖານທີ່ທ່ອງທ່ຽວຖ້ຳຜາເທົ່າໃໝ່ | ຜາເທົ່າ | ວັງວຽງ | ວຽງຈັນ |
| 26 | ສະຖານທີ່ທ່ອງທ່ຽວຖ້ຳປຸ່ງຄຳ | ນາຊົມ | ວັງວຽງ | ວຽງຈັນ |

## ຄະນະຮັບຜິດຊອບສ້າງມາດຕະຖານກິດຈະກຳການທ່ອງທ່ຽວທາງຖ້ຳ

**ຄະນະຊີ້ນຳລວມ:** ທ່ານ ປອ ອາລຸນ ບຸນມີໄຊ ຫົວໜ້າກົມພັດທະນາການທ່ອງທ່ຽວ
ທ່ານ ທະວີເພັດ ອຸລາ ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ
ທ່ານ ນາງ ພອນມະລີ ອິນທະພົມ ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ

**ຄະນະຄົ້ນຄ້ວາ ແລະ ຮຽບຮຽງ:**
ທ່ານ ສົມໄຊ ສີປະເສີດ ຫົວໜ້າພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ
ທ່ານ ນາງ ຈຳພອນ ວົງສາ ຮອງຫົວໜ້າພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ
ທ່ານ ນາງ ພອນມະນີ ສຸຂະທຳມະວົງ ຮອງຫົວໜ້າພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ
ທ່ານ ວົງແກ້ວ ສີອຳພອນ ວິຊາການພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ
ທ່ານ ພະຍຸສະຫວັນ ເດດລັດຕະນະ ວິຊາການພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ

**ອອກແບບ:** ທ່ານ ນິວະໄຊ ມາລາທິບ, ວິຊາການພະແນກສຳຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວ

# ເອກະສານອ້າງອີງ

1. ມາດຕະຖານການທ່ອງທ່ຽວໄທ, ຄູ່ມືການປະເມີນມາດຕະຖານຄຸນນະພາບແຫຼ່ງທ່ອງທ່ຽວທຳມະຊາດປະເພດຖໍ້າ
2. ຄູ່ມືແນະນຳກ່ຽວກັບຄວາມປອດໄພສຳລັບກິດຈະກຳທ່ອງທ່ຽວທາງຖໍ້າຂອງປະເທດນິວຊີແລນ, ກັນຍາ 2019

ກົມພັດທະນາການທ່ອງທ່ຽວ
ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ສະໜັບສະໜູນໂດຍ: ໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອສົ່ງເສີມການທ່ອງທ່ຽວ ໄລຍະ 2